ໃຫ້ເອົາ Data ແລະ ແຈ້ງໃຫ້ ... 21/4/2016

ກົມເຕັກໂນໂລຊີຂໍ້ມູນ-ຂ່າວສານ
ຂາເຂົ້າ ເລກທີ 221
ວັນທີ 21.04.2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງໄປສະນີ

ໂທລະຄົມມະນາຄົມແລະ ການສື່ສານ

ຫ້ອງການ

ເລກທີ 869 /ປທສ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 21 APR 2016

# ແຈ້ງການ

ເຖິງ: ບັນດາອົງການຈັດຕັ້ງລັດ-ເອກະຊົນ, ລັດວິສະຫະກິດ, ບຸກຄົນ ແລະ ນິຕິບຸກຄົນ.

ເລື່ອງ: ປະກວດຜະລິດຕະພັນ ICT ເພື່ອຊີງລາງວັນອາຊຽນປະຈຳປີ 2016 (ASEAN ICT AWARD 2016)

ຫ້ອງການ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ (ປທສ) ຂໍແຈ້ງເຖິງ ບຸກຄົນ, ນິຕິບຸກຄົນ, ສະຖາບັນການສຶກສາ, ອົງການຈັດຕັ້ງລັດ ແລະ ເອກະຊົນ ຜູ້ທີ່ມີຜົນງານດີເດັ່ນທາງດ້ານການພັດທະນາ ICT ທີ່ເປັນປະໂຫຍດໃຫ້ແກ່ສັງຄົມເຊັ່ນ: ການພັດທະນາດ້ານຊອບແວ, ຮາດແວ ແລະ ການຄົ້ນຄວ້າດ້ານ ICT ເຊີນເຂົ້າປະກວດໂຄງການ ASEAN ICT AWARD ປະຈຳປີ 2016.

I. ເງື່ອນໄຂຜູ້ເຂົ້າແຂ່ງຂັນ:

1. ເງື່ອນໄຂຜູ້ເຂົ້າຮ່ວມ:
   - ເປັນບໍລິສັດທີ່ຈົດທະບຽນຢູ່ ສປປ ລາວ ຫຼື ອາດຈະເປັນບໍລິສັດຂອງຄົນລາວ 100%; ຖ້າເປັນບໍລິສັດຮ່ວມທຶນກັບຕ່າງປະເທດຄົນລາວຈະຕ້ອງຖືຮຸ້ນຢ່າງນ້ອຍ 51% ຂອງຈຳນວນຮຸ້ນທັງໝົດ.
2. ເງື່ອນໄຂຂອງຜະລິດຕະພັນ:
   - ຖືກຕ້ອງຕາມກົດໝາຍຊັບສິນທາງປັນຍາ; ຜູ້ສະເໜີເຂົ້າແຂ່ງຂັນຕ້ອງເປັນເຈົ້າຂອງລິຂະສິດແທ້ ຫຼື ເປັນລິຂະສິດຂອງບໍລິສັດແມ່ທີ່ຢູ່ຕ່າງປະເທດ ໂດຍບໍລິສັດຢູ່ ສປປ ລາວ ມີຮຸ້ນສ່ວນ 51%.
   - ການພັດທະນາຕ້ອງເຮັດຂຶ້ນໃນ ສປປ ລາວ ຢ່າງນ້ອຍ 51% ລວມມີ: ການຄົ້ນຄວ້າ, ການພັດທະນາແລະ ການອອກແບບ.

II. ໝວດຂອງການແຂ່ງຂັນ:

ມີທັງໝົດ 6 ໝວດ (ທີ່ເປັນຊອບແວ, ຮາດແວ ຫຼື ປະສົມປະສານທັງສອງຢ່າງ ແລະ ບົດຄົ້ນຄວ້າດ້ານ ICT).

1. The Public Sector: ຜະລິດຕະພັນທີ່ນຳໃຊ້ສຳລັບການບໍລິການສາທາລະນະ ເຊິ່ງຄຸ້ມຄອງໂດຍພາກລັດ ຫຼື ຜະລິດຕະພັນທີ່ໜ່ວຍງານຂອງພາກລັດນຳໃຊ້ສຳລັບການບໍລິການສາທາລະນະ.
2. The Private Sector: ຜະລິດຕະພັນກ່ຽວຂ້ອງກັບການບໍລິການຕ່າງໆ ສຳລັບທຸລະກິດ, ສ່ວນບຸກຄົນ ຫຼື ຊຸມຊົນ ເຊັ່ນ: ດ້ານອຸດສະຫະກຳການເງິນ, ການທ່ອງທ່ຽວ ແລະ ການບໍລິການອື່ນໆ...
3. Corporate Social Responsibility: ຜະລິດຕະພັນທີ່ກ່ຽວກັບການສ້າງຜົນປະໂຫຍດຕໍ່ສັງຄົມ ຜະລິດຕະພັນສຳລັບການປັບປຸງຊີວິດການເປັນຢູ່, ປັບປຸງຄຸນນະພາບຊີວິດ ແລະ ປັບປຸງມາດຕະຖານການດຳລົງຊີວິດຂອງສັງຄົມ.
4. Digital Content: ການໃຊ້ ICT ເປັນຜະລິດຕະພັນສຳລັບການສ້າງຂໍ້ຄວາມສຽງ, ຮູບພາບ, ພາບເຄື່ອນໄຫວ,ຜະລິດຕະພັນສຳລັບການຄຸ້ມຄອງອຸດສະຫະກຳການຂ່າວ ແລະ ການບັນເທີງປະເພດຕ່າງໆເຊັ່ນ: ໂທລະພາບ, ວິທະຍຸ, ຮູບເງົາ, ໜັງສືພິມ, ຂ່າວສານທາງອິນເຕີເນັດ ແລະ ອື່ນໆ.

5. Start-Up Company: (ບໍລິສັດທີ່ດຳເນີນການສ້າງ ແລະ ພັດທະນາ ICT) ເປັນຜະລິດຕະພັນຂອງບໍລິສັດຂະໜາດນ້ອຍ ທີ່ຫາກໍ່ສ້າງຕັ້ງໃໝ່.

6. Research and Development: (ປະເພດການຄົ້ນຄວ້າ ແລະ ການພັດທະນາ) ເປັນຜະລິດຕະພັນທີ່ມີການພັດທະນາຄົ້ນຄວ້າຂຶ້ນໃໝ່, ການດຳເນີນງານໃໝ່ ຫຼື ໃຫ້ບໍລິການເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດໃນປະຈຸບັນ.

III. <u>ການຄັດເລືອກຈະແບ່ງອອກເປັນ 2 ໄລຍະຄື</u> :

- ໄລຍະທີ 1 ຄັດເລືອກຢູ່ພາຍໃນປະເທດ ແລະ ໄລຍະທີ 2 ຄັດເລືອກໃນລະດັບອາຊຽນ.
- ຜະລິດຕະພັນທີ່ຜ່ານການຄັດເລືອກຈາກພາຍໃນປະເທດ ແມ່ນຈະໄດ້ສົ່ງໄປແຂ່ງຂັນຮອບຕັດສິນ ທີ່ປະເທດມຽນມ້າ ໃນເດືອນສິງຫາ 2016 ແລະ ມອບລາງວັນເດືອນ ພະຈິກ 2016 ທີ່ປະເທດ ບລູໄນ.

IV. <u>ປະເພດລາງວັນ</u>:

1. ທຸກໆໝວດການແຂ່ງຂັນແມ່ນມີ 3 ລາງວັນ; ລາງວັນທີ 1, 2 ແລະ 3 ແຕ່ລະລາງວັນຈະໄດ້ຮັບຖ້ວຍລາງວັນ ແລະ ໃບຍັ້ງຢືນຈາກປະທານ ICT ອາຊຽນ ພ້ອມດ້ວຍເງິນອຸດໜູນສູງສຸດ 2000 USD/1 ຜະລິດຕະພັນ.
2. ມອບລາງວັນໂດຍລັດຖະມົນຕີ ICT ຂອງບັນດາປະເທດອາຊຽນ.

V. <u>ໄລຍະເປີດຮັບສະໝັກ</u>:

- ເປີດຮັບສະໝັກວັນທີ **14 ມີນາ 2016** ແລະ ປິດຮັບສະໝັກ ວັນທີ **17 ມິຖຸນາ 2016**, ຕ້ອງສົ່ງໃຫ້ກະຊວງ ປທສ ກ່ອນ 1 ອາທິດ ເພື່ອກວດແກ້ ແລະ ປັບປຸງ.

VI. <u>ການສະເໜີຜະລິດຕະພັນ ແລະ ພາສາທີ່ໃຊ້</u>:

- ທຸກຜະລິດຕະພັນທີ່ສົ່ງເຂົ້າປະກວດຕ້ອງເຮັດບົດສະເໜີຫຍໍ້ (presentation) ແລະ ວີດີໂອຄວາມຍາວ 2 - 5 ນາທີໂດຍບັນລະຍາຍເປັນພາສາອັງກິດ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານທີ່ມີຄວາມສົນສົນໃຈຢາກສົ່ງຜະລິດຕະພັນ ICT ເຂົ້າຄັດເລືອກໃນການແຂ່ງຂັນຄັ້ງນີ້ໃຫ້ມາພົວພັນທີ່ ກົມເຕັກໂນໂລຊີ-ຂໍ້ມູນຂ່າວສານ, ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ຫຼື ເຂົ້າໄປທີ່ Website: www.aseanictaward.com; www.mpt.gov.la

<u>ຕິດຕໍ່ສອບຖາມ</u>: ທ່ານ ນາງ ນ້ອຍສຸລິນທອນ ພົນສີລີ,Tel: 020 29943643, Email: soulinthone38@hotmail.com

ທ່ານ ນາງ ສອນນາລີ ແກ້ວວິຈິດ, Tel: 020 58888273, Email : sonenaly123@gmail.com

ຈ. ຫົວໜ້າຫ້ອງການ

ສະກຸນຄຳ ແກ້ວບຸນຍານິວ